## My Choice ແມ່ນໃຜ?

**ພາລະກິດຂອງພວກເຮົາ**

ພວກເຮົາມຸ່ງໝັ້ນທີ່ຈະປັບປຸງສຸຂະພາບຂອງສະມາຊິກພວກເຮົາ ແລະ ເຮັດໃຫ້ຊຸມຊົນຂອງພວກເຮົາດີຂຶ້ນ. ໃນຖານະທີ່ເປັນຜູ້ເບິ່ງແຍງດູແລກອງທຶນທີ່ເຊື່ອຖືໄດ້, ພວກເຮົາເບິ່ງແຍງດູແລບຸກຄົນຄົບຖ້ວນ ແລະ ຄວາມເປັນຢູ່ທີ່ດີຂອງພວກເຂົາທັງໝົດ ໂດຍການໃຫ້ບໍລິການທີ່ສົ່ງເສີມຄວາມເປັນອິດສະຫຼະ, ເຫັນຄຸນຄ່າຂອງຄວາມຫຼາກຫຼາຍ ແລະ ສ້າງແຮງບັນດານໃຈໃນການສະໜັບສະໜູນຕົນເອງ.





## ຕິດຕໍ່ພວກເຮົາ

**ພວກເຮົາພ້ອມຈະຊ່ວຍເຫຼືອທ່ານ!**

ໂທຫາພວກເຮົາ ຫຼື ເຂົ້າເບິ່ງເວັບໄຊຂອງພວກເຮົານີ້ນີ້ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບໂປຣແກຣມ Medicaid SSI.

**ເຂົ້າເບິ່ງ**
mychoicewi.org/medicaid-ssi/

**ໂທແບບບໍ່ເສຍຄ່າ**
800-963-0035
TTY: 711

**ເພື່ອຊອກຫາຫ້ອງການທ້ອງຖິ່ນຂອງພວກເຮົາ, ກະລຸນາເຂົ້າເບິ່ງ:**

mychoicewi.org/medicaid-ssi/program-locations/

*ມີນັກແປພາສາ ແລະ ບໍລິການແປພາສາໃຫ້ໂດຍບໍ່ເສຍຄ່າໃຊ້ຈ່າຍ. ໃບປິວນີ້ອາດຈະມີໃຫ້ໃນຮູບແບບອື່ນອີງຕາມຄຳຂໍ. ຖ້າຫາກທ່ານມີຄວາມຕ້ອງການເປັນພິເສດ, ກະລຸນາໂທ 800-963-0035 ເພື່ອຂໍຄວາມຊ່ວຍເຫຼືອ. Medicaid SSI ແມ່ນໂປຣແກຣມສາທາລະນະທີ່ໃຫ້ບໍລິການຜ່ານ Wisconsin Department of Health Services.*

*My Choice Wisconsin ໄດ້ເຊັນສັນຍາກັບ Wisconsin Medicaid ເພື່ອໃຫ້ບໍລິການ Medicaid SSI ແລະ ເປັນອົງກອນບໍລິຫານທີ່ໄດ້ຮັບການຮັບຮອງຈາກລັດວ່າເປັນນາຍຈ້າງທີ່ໃຫ້ໂອກາດເທົ່າທຽມກັນ.*

*ATENCIÓN: Si habla español, tiene a su disposición servicios gratuitos de asistencia lingüística. Llame al 800-963-0035 (TTY: 711).*



*LUS CEEV: Yog tias koj hais lus Hmoob, cov kev pab txog lus, muaj kev pab dawb rau koj. Hu rau 800-963-0035 (TTY: 711).*

DHS ອະນຸມັດວັນທີ 26 ຕຸລາ 2020

my choice WISCONSIN

# Medicaid SSI



Medicaid SSI ຊ່ວຍໃຫ້ສະມາຊິກໄດ້ຮັບຄວາມຊ່ວຍເຫຼືອເພີ່ມເຕີມທີ່ພວກເຂົາຕ້ອງການເພື່ອໃຫ້ມີສຸຂະພາບທີ່ແຂງແຮງ ແລະ ປອດໄພ.

*ການເບິ່ງແຍງດູແລເລີ່ມຕົ້ນທີ່ນີ້.*

## Medicaid SSI ແມ່ນຫຍັງ?

ໂປຣແກຣມ Medicaid SSI ຊ່ວຍຜູ້ໃຫຍ່ຜູ້ທີ່ມີສິດໄດ້ຮັບລາຍໄດ້ເສີມເພື່ອຄວາມໝັ້ນຄົງ Supplemental Security Income (SSI) ປະສານງານເລື່ອງຄວາມຕ້ອງການດ້ານການເບິ່ງແຍງດູແລສຸຂະພາບຂອງພວກເຂົາ. ຢູ່ທີ່ My Choice Wisconsin, ສະມາຊິກຂອງພວກເຮົາແມ່ນຄວາມສຳຄັນສູງສຸດຂອງພວກເຮົາ – ທ່ານ ແລະ ຜູ້ປະສານງານເບິ່ງແຍງດູແລຂອງທ່ານປັບປຸງແຜນການເບິ່ງແຍງດູແລ ແລະ ເລືອກທາງທີ່ດີທີ່ສຸດໃນການຮັບບໍລິການສຸຂະພາບຂອງທ່ານ. My Choice Wisconsin ສະໜັບສະໜູນໂປຣແກຣມ Medicaid SSI ໃນ 39 ຄາວຕີ້ໃນວິສຄອນຊິນ.

## ພວກເຮົາເຮັດຫຍັງ?

My Choice Wisconsin ດຳເນີນການໃນ 55 ເຄົາຕີ້ ແລະ ໃຫ້ Family Care, Family Care Partnership, Medicare Dual Advantage, Medicaid SSI ແລະ BadgerCare Plus. ດ້ວຍສຳນັກງານໃນ 14 ເມືອງທົ່ວວິສຄອນຊິນ, ພວກເຮົາມຸ່ງໝັ້ນທີ່ຈະເປັນຫຸ້ນສ່ວນທີ່ມີຄຸນຄາໃຫ້ແກ່ຊຸມຊົນທັງໝົດທີ່ພວກເຮົາໃຫ້ບໍລິການ.



My Choice Wisconsin ເປັນອົງກອນບໍ່ສະແຫວງຫາຜົນກຳໄລທີ່ເຮັດວຽກຮ່ວມກັນກັບອົງກອນທ້ອງຖິ່ນ ແລະ ຜູ້ໃຫ້ການເບິ່ງແຍງດູແລສຸຂະພາບເພື່ອໃຫ້ແນ່ໃຈວ່າສະມາຊິກຂອງພວກເຮົາໄດ້ຮັບທາງເລືອກທີ່ພຽງພໍ ແລະ ການຊ່ວຍເຫຼືອທີ່ມີຄຸນນະພາບສູງ ແລະ ບໍລິການຈາກເຄືອຂ່າຍທີ່ຫຼາກຫຼາຍ.

# ການປະສານງານການເບິ່ງແຍງດູແລແມ່ນຫຍັງ?

ຜູ້ປະສານງານເບິ່ງແຍງດູແລ ແລະ ຜູ້ຈັດການແພດເບິ່ງແຍງດູແລຂອງພວກເຮົາຈະຊ່ວຍທ່ານຈັດການກັບຄວາມຕ້ອງການທາງການແພດ, ພ້ອມກັນກັບບໍລິການຊຸມຊົນ ແລະ ສັງຄົມ.



ທ່ານ, ສະມາຊິກ



ຜູ້ປະສານງານການເບິ່ງແຍງດູແລຂອງທ່ານ



ທ່ານໝໍຂອງທ່ານ



ຜູ້ຈັດການແພດເບິ່ງແຍງດູແລ



ຜູ້ຊ່ຽວຊານຂອງພວກເຮົາ

# ຜົນປະໂຫຍດຂອງແຜນປະກັນ My Choice Wisconsin Medicaid SSI

## ສິດຜົນປະໂຫຍດທີ່ທ່ານອາດຈະໄດ້ຮັບ:

### ການເບິ່ງແຍງດູແລທາງການແພດແບບປ້ອງກັນ ແລະ ບໍລິການກວດແບບ ສະກຣີນນິ້ງ
ການສ້າງພູມຕ້ານທານ, ການກວດມະເຮັງເຕົ້ານົມ, ບໍລິການດ້ານການໄດ້ຍິນ

### ການຮັກສາແບບເລັ່ງດ່ວນ
ການດູແລ ສຳລັບການຕິດເຊື້ອ ແລະ ການບາດເຈັບທີ່ບໍ່ແມ່ນພາວະສຸກເສີນ ເມື່ອຄລີນິກຂອງທ່ານປິດ

### ການເຂົ້າໂຮງໝໍ
ການຢູ່ໂຮງໝໍສຳລັບການປິ່ນປົວສຸກເສີນ ແລະ ບໍ່ສຸກເສີນ

### ອຸປະກອນທາງການແພດ
ລໍ້ຄົນເຈັບ, ເຄື່ອງຊ່ວຍຍ່າງ, ອອກຊີເຈນ, ເກີບສຳລັບຜູ້ເປັນເບົາຫວານ

*ນີ້ບໍ່ແມ່ນລາຍການທັງໝົດຂອງສິດຜົນປະໂຫຍດ ແລະ ບໍລິການ. ເຂົ້າເບິ່ງພວກເຮົາທາງອອນລາຍ ຫຼື ອ່ານປຶ້ມຄູ່ມືສະມາຊິກ* Medicaid SSI *ຂອງທ່ານກ່ຽວກັບບໍລິການທີ່ໄດ້ຮັບການຄຸ້ມຄອງ, ການອະນຸຍາດລ່ວງໜ້າ ແລະ ຂໍ້ກຳນົດການຮ່ວມຈ່າຍ. ທ່ານອາດຈະໂທຫາບໍລິການສະມາຊິກ* Forward Health Member Services *ທີ່* 800-362-3002 *ຫຼື ໄປທີ່* www.forwardhealth.wi.gov *ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບໂປຣແກຣມ* Medicaid SSI *ໃນວິສຄອນຊິນ.*

### ວັດສະດຸທາງການແພດ
ຜ້າພັນບາດແຜ, ອຸປະກອນຊ່ວຍຫາຍໃຈ ແລະ ເຄື່ອງສັກຢາ

### ສຸຂະພາບຈິດ
ການໃຫ້ຄຳປຶກສາຂອງ AODA, ການເຂົ້າພົບຈິດຕະແພດ, ການເຂົ້າໂຮງໝໍ, ການປິ່ນປົວແຕ່ລະວັນ

### ບໍລິການສຸຂະພາບຢູ່ທີ່ເຮືອນ ແລະ ການເບິ່ງແຍງດູແລສ່ວນບຸກຄົນ

### ການສະໜັບສະໜູນການສືບພັນ
ການໃຫ້ຄຳປຶກສາການວາງແຜນຄອບຄົວ, ການຖືພາ ແລະ ການຊ່ວຍເຫຼືອການເກີດລູກ

### ສາຍຕາ
ການເຂົ້າຮັບການຜ່າຕັດ ແລະ ການເຂົ້າພົບທ່ານໝໍລວມທັງແວ່ນຕາໜຶ່ງຄູ່ ແລະ ການປ່ຽນແທນແວ່ນຕາໜຶ່ງຄູ່ຕໍ່ 12 ເດືອນ

### ບໍລິການບຳບັດ
ການໃຫ້ຄຳປຶກສາຂອງ AODA, ການບຳບັດທາງດ້ານຮ່າງກາຍ, ການປະກອບອາຊີບ, ການບຳບັດການເວົ້າ ແລະ ພາສາ

# ຂ້ອຍມີສິດເຂົ້າຮ່ວມບໍ?

**ແມ່ນໃຜສາມາດເຂົ້າຮ່ວມ My Choice Wisconsin Medicaid SSI**

- ອາຍຸ 19 ປີ ຂຶ້ນໄປ
- ທ່າມີສິດໄດ້ຮັບ ຫຼື ໄດ້ຮັບລາຍຮັບເສີມເພື່ອຄວາມໝັ້ນຄົງ (SSI) ເນື່ອງຈາກການກຳນົດຄວາມພິການ
- ທ່ານມີຄຸນສົມບັດ ຫຼື ໄດ້ຮັບຄວາມຊ່ວຍເຫຼືອ Medicaid ຂອງລັດຕາມລາຍຮັບ ແລະ ຊັບສິນ
- ທ່ານອາໄສຢູ່ໃນຄາວຕີ້ທີ່ມີ Medicaid SSI ໃຫ້. My Choice Wisconsin ສະໜັບສະໜູນໂປຣແກຣມ Medicaid SSI ຢູ່ໃນ **39 ເຄົາຕີ້**

